<u>ພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫ່ວ່າງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ກັບ ບໍລິສັດ ປີໂຕເທຣດດິ້ງ ລາວ ມະຫາຊົນ</u>



ໃນຕອນເຊົ້າ ຂອງວັນທີ 26 ມັງກອນ ເວລາ 09:00 ໂມງ, ທີ່ ຫ້ອງປະຊຸມ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ໄດ້ມີພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫ່ວ່າງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ (ສຄອຊ) ແລະ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ. ໃຫ້ກຽດລົງນາມເຊັນໂດຍ ທ່ານ ນາງ ຈັນທະຈອນ ວົງໄຊ ຮອງປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ທ່ານ ມາກ ລູວັນ ຜູ້ຈັດການທົ່ວໄປ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫານຊົນ, ມີຜູ້ເຂົ້າຮ່ວມຈາກ ຕ່າງໜ້າຈາກຄະນະ ບໍລິຫານງານ ສຄອຊ, ກຸ່ມ, ສະມາຄົມ ແລະ ຫ້ອໜ່ວຍທຸລະກິດ ລວມແຂກທີ່ຖືກເຊີນເຂົ້າຮ່ວມທັງໝົດ ປະມານ 60 ກ່ວາທ່ານ.

ເນື້ອໃນຕົ້ນຕໍ່ຫຼັກໃນການເຊັ່ນບົດບັນທຶກຄວາມເຂົ້າໃຈໃນຄັ້ງນີ້ມີລາຍລະອຽດດັ່ງນີ້: ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ສຄອຊ) ແລະ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ໄດ້ຕົກລົງຮ່ວມມືເປັນຄູ່ຮ່ວມຍຸດທະສາດ ໃນການສົ່ງເສີມຜະລິດຕະພັນລາວເຂົ້າສູ່ຕະຫລາດພາຍໃນ ເພື່ອຍົກລະດັບຜະລິດຕະພັນລາວໃຫ້ໄດ້ມາດຕະຖານ ແລະ ກ້າວເຂົ້າສູ່ຕະຫລາດສາກົນໃນອານາຄົດ ໂດຍຜ່ານງານວາງສະແດງ ຜະລິດຕະພັນລາວ (Made in Laos) ໂດຍທາງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຈະໃຫ້ການສະໜັບສະໜູນດ້ານງົບປະມານ 200,000,00ກີບ/ປີ (ສອງຮ້ອຍລ້ານກີບ/ປີ).



ໄລຍະການເວລາການສະໜັບສະໜູນ 3 ປີ, ແຕ່ປີ 2021-2023, ຈຸດປະສົງ ເພື່ອຊຸກຍູ້, ສົ່ງເສີມຜະລິດຕະພັນລາວທົ່ວປະເທດ ແລະ ຍົກລະດັບຄຸນນະພາບຂອງຜະລິດຕະພັນລາວໃຫ້ມີຄຸນນະພາບທຽບເທົ່າລະດັບສາກົນ ໂດຍສະເພາະແມ່ນຜະລິດຕະພັນທ້ອງຖິ່ນໃຫ້ກາຍເປັນສິນຄ້າທີ່ໄດ້ມາດຕະຖານສາມາດເປັນທີ່ຍອມຮັບທັງພາຍໃນ ແລະ ຕ່າງປະເທດ ໃນການຊຸກຍູ້ສົ່ງເສີມເຊິ່ງກັນແລະກັນ ໃນການມີສ່ວນຮ່ວມ ໃນການສ້າງສາພັດທະນາເສດຖະກິດຂອງຊາດ.

ພາຍຫຼັງພິທີລົງນາມ ບົດບັນທຶກແລ້ວ ບັນດາແຂກທີ່ເຂົ້າຮ່ວມກໍ່ໄດ້ລົງຢ້ຽມຢາມຜະລິດຕະພັນຂອງ ບໍລິສັດ ໄພບຸນ ການຄ້າ ຂາເຂົ້າ-ຂາອອກ ຈຳກັດ ເຊິ່ງເປັນບໍລິສັດໃນເຄືອຂອງ ກຸ່ມບໍລິສັດ ພົງສະຫວັນ ເປັນຜົນຜະລິດຂອງ ໂຄງການ ສ້າງຄອບຄົວ ແລະ ບ້ານສາມັກຄີປອງດອງ ແນວລາວສ້າງຊາດ ພາຍໃຕ້ສັນຍາລັກ ສາມັກຄີ ເປັນ ຜະລິດຕະພັນສົ່ງເສີມຜະລິດຕະພັນລາວຢ່າງແທ້ຈິງ.




Sa Ma Khee






Sweet Purple Potato Chips
Sweet Purple Potato Chips










งาดำ
Black Sesame Seeds
งาลาว
White Sesame Seeds




เข้าข้าว
Kainoy Rice

